

ປະຫວັດສາດໂດຍຫຍໍ້ຂອງ

# ປະເທດລາວ

*ເມືອງຢູ່ໃຈກາງແຜ່ນດິນໃຫຍ່ອາຊີອາຄະເນ*

ກຣານທ໌ ເອແວນສ໌

ປະຫວັດສາດໂດຍຫຍໍ້ຂອງ

# ປະເທດລາວ

ເມືອງຢູ່ໃຈກາງແຜ່ນດິນໃຫຍ່ອາຊີອາຄະເນ

ກຣານທ໌ ເອແວນສ໌

SILKWORM BOOKS

Published with the generous asistance of SIDA, Vientiane
and kind permission from Allen&Unwin, Australia

**ປະຫວັດສາດໂດຍຫຍໍ້ຂອງປະເທດລາວ: ເມືອງຢູ່ໃຈກາງແຜ່ນດິນໃຫຍ່ອາຊີອາຄະເນ**
**ກຣານທ໌ ເອແວນສ໌**

ພາສາອັງກິດ © 2002 Grant Evans
ພາສາລາວ © 2006 ກຣານທ໌ ເອແວນສ໌

ISBN–10: 974-9511-21-2
ISBN–13: 978-974-9511-21-3

ຕິດຕ່ອຊື້ໄດ້ທີ່
First published in Thailand in 2006 by
Silkworm Books
6 Sukkasem Road, T. Suthep
Chiang Mai 50200 Thailand
Tel: 6653 2261 61-3, Fax: 6653 2266 43
E-mail address: info@silkwormbooks.com
http://www.silkwormbooks.com

Printed in Thailand by O. S. Printing House, Bangkok

# ສາລະບານ


**ຄຳນຳ** ... ... ... ... ... ... ... ... ... ... (7)

**ການສະແດງຄວາມຮູ້ບຸນຄຸນ** ... ... ... ... ... ... ... (9)

**1. ກ່ອນເປັນປະເທດລາວ** ... ... ... ... ... ... ... ... 1

ຊາວໄຕ ... ... ... ... ... ... ... ... ... ... 2

ການຈັດຕັ້ງທາງສັງຄົມຂອງຊາວໄຕ ... ... ... ... ... ... 4

ການຕິດຕໍ່ພົວພັນກັບບັນດາລັດທີ່ຢູ່ທີ່ງພຽງ ... ... ... ... ... ... 5

ການແຜ່ຂະຫຍາຍຂອງສາສະໜາພຸດ ... ... ... ... ... ... 7

ອານາຈັກລ້ານຊ້າງ ... ... ... ... ... ... ... ... 10

ສາສະໜາພຸດ ແລະ ສັງຄົມ ... ... ... ... ... ... ... 13

ຍຸກເຮືອງອຳນາດ ແລະ ຍຸກລົ້ມສະຫລາຍຂອງອານາຈັກລ້ານຊ້າງ ... ... 15

ອານາຈັກລ້ານຊ້າງ ແລະ ໂລກພາຍນອກ ... ... ... ... ... ... ... 20

ຄວາມສະງົບກັງນທາງການເມືອງ ... ... ... ... ... ... ... 24

ກະສັດຊຸນເສິກອົງສຸດທ້າຍ ... ... ... ... ... ... ... 25

"ການສ້າງຄວາມເປັນລາວ" ຢູ່ທີ່ພູພຽງໂຄຣາດ ... ... ... ... ... ... 31

ຫລວງພະບາງໃນສະຕະວັດທີ 19 ... ... ... ... ... ... ... ... 33

ການຮຸກຮານຂອງຫໍ້ ... ... ... ... ... ... ... ... 36

ຄົນລາວກັບຄົນສະຫຍາມ ... ... ... ... ... ... ... ... 39

**2. ປະເທດລາວພາຍໃຕ້ການປົກຄອງຂອງຝຣັ່ງເສດ** ... ... ... ... ... 43

ແຜນທີ່ຂອງປະເທດລາວໄດ້ຮັບການສ້າງຂຶ້ນ ... ... ... ... ... 44

ພາລະກິດການສ້າງ "ຄວາມສີວິໄລ" ... ... ... ... ... ... 46
ການປົກຄອງຂອງລະບອບລ່າເມືອງຂຶ້ນ ... ... ... ... ... ... 48
ເສດຖະກິດພື້ນຖານທີ່ຮຽບງ່າຍ ... ... ... ... ... ... ... 53
ການຜູກຂາດການຄ້າຢາຝິ່ນ ... ... ... ... ... ... ... 57
ການລຸກຮື້ຂຶ້ນ ... ... ... ... ... ... ... ... ... 58
ການລຸກຂຶ້ນຕໍ່ຕ້ານຂອງຊາວມົ້ງ ... ... ... ... ... ... ... 61
ສັງຄົມທົ່ວເມືອງຂຶ້ນ ... ... ... ... ... ... ... ... 64
ຝຣັ່ງເສດໃນຖານະເປັນແບບຢ່າງຂອງຄວາມທັນສະໄໝ ... ... ... ... 67
ລັດທິຈຳແນກເຊື້ອຊາດ ແລະ ການລື່ນເລີງທາງເພດ ... ... ... ... 69
ການສ້າງຕົວເມືອງໃນຍຸກລ່າເມືອງຂຶ້ນ ... ... ... ... ... ... 73
ລັດທິຊາດນິຍົມ ... ... ... ... ... ... ... ... ... 75
ຄວາມທ້າທາຍໃນການປະເຊີນໜ້າກັບໄທ ແລະ ສົງຄາມໂລກຄັ້ງທີ 2 ... ... 78
ລັດທິຊາດນິຍົມພາຍໃຕ້ການສະໜັບສະໜູນຂອງຝຣັ່ງເສດ ... ... ... 82
ຂະບວນການລາວອິດສະຣະ ... ... ... ... ... ... ... 85
ຫວຽດມິງລະດົມພົນໄດ້ເປັນຄັ້ງທຳອິດ ... ... ... ... ... ... 88
ບັ້ນອາວະສານຂອງລະບອບລ່າເມືອງຂຶ້ນ ... ... ... ... ... ... 91

**3. ລັດຖະບານຣາດຊະອານາຈັກລາວ** ... ... ... ... ... ... 97
ທົດສະວັດ 1950: ຍຸກແຫ່ງຄວາມຫວັງ ... ... ... ... ... ... 98
ຄວາມດ້ອຍພັດທະນາ ... ... ... ... ... ... ... 99
"ພາລະກິດສ້າງຄວາມສີວິໄລ" ຂອງອາເມລິກາ ... ... ... ... ... 101
ການຊ່ວຍເຫລືອແບບບໍ່ຮັບຜິດຊອບຂອງສະຫະລັດອາເມລິກາ ... ... ... 104
ການເມືອງຜູ້ໃຫຍ່ ... ... ... ... ... ... ... ... ... 106
ລັດທິເປັນກາງນິຍົມ ... ... ... ... ... ... ... ... 108
ການເມືອງຍຸກສົງຄາມເຢັນຢູ່ໃນປະເທດລາວ ... ... ... ... ... 112
ກອງທັບເຂົ້າແຊກແຊງໃນວົງການການເມືອງ ... ... ... ... ... 114
ລັດຖະປະຫານຂອງກອງແລ ... ... ... ... ... ... ... 119
ອິດທິພົນຂອງຂະບວນການປະຕິວັດທີ່ພວມເຕີບໃຫຍ່ ... ... ... ... 123
ສຸລິຍະຄາດຂອງລັດທິເປັນກາງນິຍົມ ... ... ... ... ... ... 127
ການດຳລົງຊີວິດຢູ່ພາຍໃຕ້ຝ່າຍປະເທດລາວ ... ... ... ... ... 132
ທີ່ປຶກສາຫວຽດນາມ ແລະ ຝ່າຍປະເທດລາວ ... ... ... ... ... 135
ບັນດາຊົນເຜົ່າສ່ວນໜ້ອຍ ... ... ... ... ... ... ... 138

ການເມືອງເຜົ່າມົ້ງເຂດເນີນສູງ ກັບ ລຣລ ... ... ... ... ... 141
ການຂຶ້ນມາມີບົດບາດຂອງ ນາຍພົນ ວ່າງປາວ ... ... ... ... ... 144
**4. ສົງຄາມ ແລະ ການລົ້ມສະຫລາຍຂອງຣາດຊະອານາຈັກລາວ** ... ... ... 151
ຍຸກສົງຄາມ ... ... ... ... ... ... ... ... ... 152
ສັງຄົມໃຫມ່? ... ... ... ... ... ... ... ... ... 157
ຈິດສຳນຶກໃຫມ່ ... ... ... ... ... ... ... ... ... 160
ການປ່ຽນແປງທາງສັງຄົມ ແລະ ຄວາມກັງວົນຕໍ່ວັດທະນະທຳ ... ... ... 161
ປະເຊີນຫນ້າກັບສະພາວະກົ້ນບໍ່ເຂົ້າຖາຍບໍ່ອອກຂອງການພັດທະນາ ... ... 164
ການສໍ້ລາດບັງຫລວງ ແລະ ລັດທິຈຸ້ມເຈື້ອເຊື້ອສາຍ ... ... ... ... ... 165
ນະໂຍບາຍການເມືອງກ່ຽວກັບຢາຝິ່ນ ... ... ... ... ... ... 167
ພະຣາດຊະວັງ ... ... ... ... ... ... ... ... ... 170
ລັດຖະບານປະສົມຊຸດສຸດທ້າຍ ... ... ... ... ... ... ... 173
ການໂຄ່ນລົ້ມ ລຣລ ຈາກພາຍໃນ ... ... ... ... ... ... 175
ການຍຶດອຳນາດຢ່າງຊ້າໆ ... ... ... ... ... ... ... ... 180
**5. ສາທາລະນະລັດປະຊາທິປະໄຕປະຊາຊົນລາວ** ... ... ... ... ... ... 183
ການອົບພະຍົກຄັ້ງໃຫຍ່ຂອງພົນລະເມືອງ ... ... ... ... ... ... 184
ສູນສຳມະນາ ... ... ... ... ... ... ... ... ... 186
ການຕໍ່ຕ້ານຂອງຊາວມົ້ງທີ່ເສດເຫລືອຈາກກຳລັງວ່າງປາວ ... ... ... ... 190
ຄວາມປອດໄພຂອງຊາດ ... ... ... ... ... ... ... ... 194
"ພາລະກິດສ້າງຄວາມສີວິໄລ" ຂອງຫວຽດນາມ ... ... ... ... ... 196
ການຫັນເປັນສະຫະກອນລວມຫມູ່ ... ... ... ... ... ... ... 199
ວັດທະນາທຳ ແລະ ສັງຄົມ ... ... ... ... ... ... ... 202
ການສຶກສາ ... ... ... ... ... ... ... ... ... 204
ການສ້າງສະເຖຍລະພາບ ... ... ... ... ... ... ... ... 206
ການຫັນທິດໄປສູ່ຕະຫລາດໂລກ ... ... ... ... ... ... ... 208
**6. ພາຍຫລັງລະບອບສັງຄົມນິຍົມ** ... ... ... ... ... ... ... 211
ພັກຫນຶ່ງພັກດຽວ ... ... ... ... ... ... ... ... 212
ສັງຄົມພົນລະເຮືອນ ... ... ... ... ... ... ... ... 215
ການຟື້ນຟູວັດທະນະທຳຂອງຊາດ ... ... ... ... ... ... ... 219
ສັງຄົມເກົ່າໃນຍຸກສະໄໝໃໝ່ ... ... ... ... ... ... ... 224
ການສຶກສາ ... ... ... ... ... ... ... ... ... 225

ຊົນເຜົ່າສ່ວນຫນ້ອຍ ... ... ... ... ... ... ... ... 227
ຂໍ້ຂັດແຍ້ງໃໝ່ທາງເສດຖະກິດ ... ... ... ... ... ... ... 229
ການສໍ້ລາດບັງຫລວງ ... ... ... ... ... ... ... ... 232
ໄປຫນ້າສອງກ້າວ, ຖອຍຫລັງຫນຶ່ງກ້າວ ... ... ... ... ... ... 234
ອະນາຄົດ ... ... ... ... ... ... ... ... ... ... 238
**7. ປະເທດລາວໃນໂລກສະໄຫມໃໝ່** ... ... ... ... ... ... ... 241
ພາຍໃນພາກພື້ນອາຊີ ... ... ... ... ... ... ... ... 242
ພວກຕັ້ງຖິ່ນຖານໃໝ່ໃນຕ່າງແດນ ... ... ... ... ... ... ... 248
ຫລຽວຫລັງແລຫນ້າ ... ... ... ... ... ... ... ... 252
**ປຶ້ມທີ່ແນະນຳໃຫ້ອ່ານຕື່ມ** ... ... ... ... ... ... ... ... 257

# ຄຳນຳ

ຫລັງຈາກໄດ້ພິມປຶ້ມປະຫວັດສາດສະບັບພາສາອັງກິດອອກ ໃນປີ 2002 ກໍ່ໄດ້ມີການປະກອບຄຳເຫັນຢູ່ໃນໜັງສືພິມ *ວຽງຈັນທາມສ໌* ເຊິ່ງໄດ້ຮຽກຮ້ອງໃຫ້ມີສະບັບພາສາລາວ. ສະນັ້ນ ສະບັບພາສາລາວຢູ່ນີ້ແລ້ວ ຂ້າພະເຈົ້າຫວັງວ່າ ທ່ານຜູ້ອ່ານຊາວລາວຄົງຈະອ່ານດ້ວຍຄວາມເພີດເພີນ

ຂ້າພະເຈົ້າໄດ້ກວດແກ້ປຶ້ມຫົວນີ້ໜ້ອຍໜຶ່ງ ເພາະມີບາງຂໍ້ມູນໃໝ່ເຂົ້າມາກ່ຽວກັບອະດີດຕະການອັນຍາວໄກ ແລະເມື່ອການເວລາຜ່ານໄປ ເຫດການໃໝ່ກໍ່ໄດ້ເກີດຂຶ້ນ ເຊິ່ງເຫັນສົມຄວນຕ້ອງເອົາເຂົ້າໃນບົດບັນຍາຍຕື່ມອີກ ເຊັ່ນດຽວກັນ; ຍົກຕົວຢ່າງ ກອງປະຊຸມຄັ້ງປະຫວັດສາດຂອງອາຊຽນ ໃນເດືອນພະຈິກ ປີ 2004 ເປັນຕົ້ນ.

ການຂຽນປະຫວັດສາດແມ່ນວຽກທີ່ແລ້ວບໍ່ເປັນ ແລະເປີດຮັບການດັດແກ້ໄດ້ຢູ່ສະເໝີ. ບໍ່ມີບຸກຄົນ ຫລືປະເທດໃດໜຶ່ງ ຈະສາມາດອ້າງວ່າມີຄວາມຈິງກ່ຽວກັບອະດີດຕະການຂອງຕົນເອງໄດ້. ເຫດຜົນທຳອິດກໍ່ແມ່ນວ່າ ປະຫວັດສາດເປັນຂະແໜງທີ່ກວ້າງຂວາງແລະສະລັບຊັບຊ້ອນເກີນໄປ. ຍິ່ງໄປກວ່ານັ້ນ ມັນຍັງຮຽກຮ້ອງໃຫ້ມີການເຮັດວຽກຢ່າງລະອຽດລະອໍ ແລະ ຢ່າງລະມັດລະວັງຫລາຍສົມຄວນຂອງຫລາຍໆຄົນ ທີ່ສຶກສາຄົ້ນຄວ້າກ່ຽວກັບຊ່ວງເວລາແລະເຫດການປະຫວັດສາດໃດໜຶ່ງໂດຍສະເພາະ ກ່ອນທີ່ພວກເຮົາຈະເຂົ້າໃຈຢ່າງແທ້ຈິງ. ມີແຕ່ຜ່ານການປຶກສາຫາລືໃນກຸ່ມນັກຄົ້ນຄວ້າເຫລົ່ານີ້ຢ່າງຕໍ່ເນື່ອງເທົ່ານັ້ນ ພວກເຮົາຈຶ່ງຈະສາມາດເຂົ້າໃຈກ່ຽວກັບອະດີດຕະການຂອງປະເທດລາວໄດ້ດີຂຶ້ນ.

ປຶ້ມຫົວນີ້ ແມ່ນຜົນການປະກອບສ່ວນຕໍ່ການປຶກສາຫາລືດັ່ງກ່າວນັ້ນ. ບໍ່ຕ້ອງສົງໄສເລີຍວ່າ ບາງຄຳຄິດເຫັນທີ່ໄດ້ນຳສະເໜີໃນຫລາຍໜ້າຕໍ່ໄປນີ້ ຈະເປັນການກະທົບຕໍ່ຜູ້ອ່ານທີ່ໜຸ່ມນ້ອຍເຊິ່ງໄດ້ເຕີບໂຕຢູ່ພາຍໃຕ້ ສປປ ລາວ ແລະໄດ້ສຳຜັດກັບຄຳຄິດເຫັນກ່ຽວກັບປະຫວັດສາດໃນຍຸກປັດຈຸບັນຈາກແຫລ່ງດຽວເທົ່ານັ້ນ. ບາງຄົນອາດຈະປະຕິເສດຢ່າງກະທັນຫັນຕໍ່ສິ່ງທີ່ຂ້າພະເຈົ້າຂຽນຂຶ້ນ. ໃນຂະນະທີ່ຄົນອື່ນອາດຈະເຊື່ອໃນການຕີຄວາມໝາຍຂອງຂ້າພະເຈົ້າໃນບາງສ່ວນ. ແລະ ບາງຄົນອາດຈະຍອມຮັບເອົາຄວາມທ້າທາຍທີ່ຈະຄິດກ່ຽວກັບປະຫວັດສາດຂອງລາວແບບໃໝ່. ຄວາມຫວັງຕົ້ນຕໍຂອງຂ້າພະເຈົ້າຕໍ່ກັບໃນປຶ້ມຫົວນີ້ ແມ່ນວ່າມັນຈະກະຕຸ້ນຄວາມຄິດ ແລະ

ການໂຕ້ວາທີກ່ຽວກັບອະດີດຕະການຂອງລາວ ແລະກະຕຸກຊຸກຍູ້ປັນຍາຊົນຜູ້ໜຸ່ມນ້ອຍ ໃຫ້ດຳເນີນການຄົ້ນຄວ້າຢ່າງເລິກເຊິ່ງຕື່ມອີກ.

ຄວາມຈິງແລ້ວ ຂະແໜງການນີ້ແມ່ນເປີດກວ້າງຕໍ່ການສົນທະນາປຶກສາຫາລື ເພາະວ່າບໍ່ວ່າຈະເປັນຊ່ວງໃດກໍ່ຕາມຂອງປະຫວັດສາດລາວ ໄດ້ມີການຄົ້ນຄວ້າເບື້ອງຕົ້ນໜ້ອຍຫລາຍ, ນັບຕັ້ງແຕ່ສະໄໝເຈົ້າຟ້າງຸ່ມ ຕະຫລອດຈົນຮອດປັດຈຸບັນ. ຂໍ້ຍົກເວັ້ນດຽວ ແມ່ນການເອົາໃຈໃສ່ທຸ່ມເທໃສ່ການສຶກສາຄົ້ນຄວ້າສະໄໝສົງຄາມ ລະຫວ່າງເຈົ້າອານຸກັບສະຫຍາມ ໃນລະຫວ່າງປີ 1827-28 ຫລາຍເປັນພິເສດ, ເຊິ່ງເປັນເຫດການປະຫວັດສາດໜຶ່ງທີ່ສຳຄັນແທ້. ຍົກຕົວຢ່າງແຕ່ລະບົບເສດຖະກິດ-ສັງຄົມ ພາຍໃຕ້ການປົກຄອງຂອງເຈົ້າອານຸ ພັດຍັງບໍ່ທັນໄດ້ຮັບການຄົ້ນຄວ້າເບິ່ງຢ່າງຈົບດີເທື່ອ. ຈວບຈົນ ປີ 2003 ຈຶ່ງໄດ້ມີນັກສຶກສາຊາວຍີ່ປຸ່ນຄົນໜຶ່ງຊື່ວ່າທ່ານ ມາຊຸຮາຣາ ໄດ້ຂຽນປະຫວັດສາດດ້ານເສດຖະກິດຂອງຍຸກອານາຈັກລ້ານຊ້າງຂຶ້ນ ແລະຈາກນັ້ນຈຶ່ງໄດ້ມີວຽກງານສຶກສາຄົ້ນຄວ້າດ້ານນີ້ຫລາຍຂຶ້ນ. ສ່ວນປະຫວັດສາດດ້ານເສດຖະກິດຂອງຍຸກທັນສະໄໝນັ້ນຍັງບໍ່ທັນມີ ເປັນຕົ້ນວ່າ ພວກເຮົາຍັງບໍ່ທັນມີບົດຄົ້ນຄວ້າປະຫວັດສາດດີໆຈັກບົດເທື່ອກ່ຽວກັບຍຸກທີ່ຝຣັ່ງເສດປົກຄອງປະເທດລາວ ໃນຂະນະທີ່ປະຫວັດສາດອັນສະງ່າງາມກ່ຽວກັບລະບອບລ່າເມືອງຂຶ້ນຝຣັ່ງຫລາຍບົດໄດ້ຖືກຂຽນຂຶ້ນໃນປະເທດກຳປູເຈຍແລະຫວຽດນາມ. ໃນສະພາບເງື່ອນໄຂທີ່ຍັງຂາດການສຶກສາຄົ້ນຄວ້າຢູ່ນີ້ ປຶ້ມປະຫວັດສາດຫຍໍ້ ເຊັ່ນໃນປຶ້ມຫົວນີ້ກໍ່ໄດ້ແຕ່ນຳສະເໜີຂໍ້ສະຫລູບຕ່າງໆທີ່ໄດ້ຮັບຈາກບັນດານັກປະຫວັດສາດ ຮອດເວລານີ້ເທົ່ານັ້ນ.

ນອກຈາກປຶ້ມຫົວນີ້ຈະຂຽນສຳລັບຄົນລາວທີ່ອາໄສຢູ່ພາຍໃນປະເທດລາວ ກໍ່ມີຈຸດມຸ່ງໝາຍແນໃສ່ຊາວລາວຢູ່ຕ່າງແດນ ຜູ້ທີ່ຍັງມີຄວາມຫຍຸ້ງຍາກໃນການອ່ານພາສາອັງກິດຢູ່ເຊັ່ນດຽວກັນ. ນອກຈາກນີ້ ປຶ້ມດັ່ງກ່າວຍັງໄດ້ຕັ້ງຄວາມຫວັງໄວ້ວ່າ ຈະສະໜອງພາບອັນສົດໆຮ້ອນໆຂອງປະຫວັດສາດລາວໃຫ້ເຂົາເຈົ້າໄດ້ຮັບຊາບ ແລະສ້າງຄວາມໝັ້ນໃຈໃນການສົນທະນາເລື່ອງປະຫວັດສາດລາວ ບໍ່ພຽງແຕ່ກັບລູກຫລານຂອງເຂົາເຈົ້າເທົ່ານັ້ນ ແຕ່ກັບຜູ້ຄົນອ້ອມຂ້າງຕົນຢູ່ໃນດິນແດນທີ່ເຂົາເຈົ້າຍຶດຫລັກອາໄສນັ້ນ ນຳອີກ.

ບົດແປພາສາລາວສະບັບນີ້ມີບາງພາກສ່ວນ (ໂດຍສະເພາະແມ່ນ ບົດທີ 5 ແລະ 6 ເຊິ່ງໝາຍສະແດງດ້ວຍຈ້ຳ 3 ເມັດ) ໄດ້ຮັບການຄັດລອກ, ດັດແປງ ແລະແກ້ໄຂໃຫ້ເໝາະສົມກັບລະບອບປັດຈຸບັນ ຈາກຜູ້ຊ່ຽວຊານທາງຝ່າຍລາວ. ທ່ານສາມາດອ່ານເພີ່ມໄດ້ໃນເວັບໄຊຂອງຊິລຄ໌ເວີມ ບຸກສ໌ (http://www.silkwormbooks.com).

ສິ່ງສຸດທ້າຍ ຂ້າພະເຈົ້າເວົ້າໄດ້ວ່າ ປະຫວັດສາດລາວ ແມ່ນສິ່ງທີ່ເປັນໜ້າປະທັບໃຈແທ້.

ສາດສະດາຈານ ກຣານທ໌ ເອແວນສ໌

ທີ່ຣົງກົງ ປີ 2006

# ການສະແດງຄວາມຮູ້ບຸນຄຸນ

ມີຫລາຍທ່ານໄດ້ນຳໃຊ້ເວລາອັນມີຄ່າຂອງຕົນອ່ານ ແລະໃຫ້ຄວາມຈະແຈ້ງໃນຫລາຍໆຈຸດຂອງປຶ້ມປະຫວັດສາດທີວນີ້. ຂ້າພະເຈົ້າໄດ້ຮ້ອງຂໍໃຫ້ເພື່ອນເກົ່າຂອງຂ້າພະເຈົ້າ ທ່ານສະຕິວດ ແມັກຄິນທາຍຣ໌ (Stuart Macintyre) ເຊິ່ງເປັນຫນຶ່ງໃນບັນດານັກປະຫວັດສາດທີ່ນຳຫນ້າຂອງອົດສະຕຼາລີ ອ່ານປຶ້ມເຫລັ້ມນີ້ຊ່ວຍຕື່ມອີກ ນີ້ກໍ່ເພາະວ່າເພິ່ນຮູ້ຫຍັງບໍ່ຫລາຍກ່ຽວກັບປະເທດລາວ ແລະສາມາດສຸມໃສ່ສິ່ງທີ່ຜູ້ຊ່ຽວຊານທັງຫລາຍຮັບຮູ້ກັນໃນຂະແຫນງການປະຫວັດສາດ. ທັດສະນະລະອຽດຖີ່ຖ້ວນລະມັດລະວັງອັນລືຊື່ຂອງເພິ່ນ ໄດ້ຮັບປະກັນໃຫ້ເນື້ອເລື່ອງໃນປຶ້ມທີວນີ້ຈະແຈ້ງແລະເຂົ້າໃຈງ່າຍສຳລັບນັກອ່ານໃຫມ່. ການຕອບໂຕ້ຂອງ ທ່ານ ຊໍເຣນ ອິນວາເຊິນ (Soren Invarsson), ຫນຶ່ງໃນນັກປະຫວັດສາດກ່ຽວກັບປະເທດລາວລຸ້ນໃຫມ່ ໄດ້ເຮັດໃຫ້ຂ້າພະເຈົ້າຮູ້ສຶກຫມັ້ນໃຈຫລາຍຂຶ້ນ ກ່ຽວກັບບົດປະຫວັດສາດລາວທີ່ຂ້າພະເຈົ້າໄດ້ຂຽນຂຶ້ນຢູ່ໃນປຶ້ມທີວນີ້. ທ່ານ ທອງຣິດ ພູມີຣາດ ເຊິ່ງປັດຈຸບັນນີ້ເນລະເທດຢູ່ໃນປະເທດອົດສະຕຼາລີ ໄດ້ສ້າງຄວາມຫມັ້ນໃຈໃຫ້ແກ່ຂ້າພະເຈົ້າວ່າ ບົດດັ່ງກ່າວນີ້ແມ່ນເວົ້າກັບປະຊາຊົນລາວແທ້ ເຖິງແມ່ນວ່າບໍ່ໄດ້ນຳສະເຫນີເລື່ອງທີ່ຄຸ້ນເຄີຍສຳລັບເຂົາເຈົ້າສະເຫນີໄປກໍ່ຕາມ. ທ່ານ ປີດເຕີ ກໍເຣດ (Peter Koret) ໄດ້ອຳນວຍຄວາມສະດວກໃຫ້ຂ້າພະເຈົ້າສາມາດນຳເອົາສ່ວນຫນຶ່ງຂອງບົດແປບົດກະວີ "ສານລຶບພະສູນ" ຂອງລາວ ມານຳສະເຫນີຢູ່ໃນບົດທຳອິດ ເຊິ່ງເປັນບົດເປີດທີວເລື່ອງ. ສ່ວນບຸກຄົນອື່ນໆກໍ່ໄດ້ໃຫ້ການຊ່ວຍເຫລືອໃນຫລາຍຮູບແບບເຊັ່ນກັນ ໂດຍສະເພາະຜ່ານການປຶກສາຫາລື ແລະການແລກປ່ຽນຂໍ້ມູນຂ່າວສານກັນ. ບັນດາບຸກຄົນດັ່ງກ່າວເຫລົ່ານີ້ ໄດ້ແກ່ ທ່ານ ໂຈດສ໌ ດານເລ (George Dalley), ທ່ານ ອາເທີ ໂດມເມນ, (Arthur Domen) ທ່ານ ກະຣິດສ໌ ໂກດສ໌ຊາ (Chris Gosha), ທ່ານ ໂຈແອນ ຮາລ໌ເພີນ (Joel Halpern), ທ່ານ ເຜີຍພັນ ເຫງົ້າສີວັດ, ທ່ານ ພຸວົງ ພິມມະສອນ (ຜູ້ເຊິ່ງໄດ້ມີລະນະກຳລັງຢ່າງຫນ້າເສົ້າໃນຊ່ວງແຕ່ງປຶ້ມນີ້) ແລະເຈົ້າຊາຍ ມັງຄະລະ ສຸວັນນະພູມາ. ພະນັກງານຫໍສະມຸດຈາກຫໍສະມຸດເຄນເນດີ ແລະ ຫໍສະມຸດບອດສ໌ເຕີນ ໄດ້ເປັນຜູ້ເອື້ອເຟື້ອຊ່ວຍເຫລືອເວລາທີ່ຂ້າພະເຈົ້າໄປຢ້ຽມຢາມທີ່ນັ້ນ. ທ່ານ ຣົດສ໌ແມຣີ ເດີເດຍ (Rosemary de Dear) ໄດ້ເຮັດໃຫ້ຮູບພາບປະກອບຫລາຍພາບຄົມຊັດຂຶ້ນດ້ວຍເຕັກນິກອັນຫນ້າອັດສະຈັນ. ທ້າຍທີ່ສຸດຂ້າພະເຈົ້າຢາກຂໍຂອບໃຈນຳ

(10) ✣ ການສະແດງຄວາມຮູ້ບຸນຄຸນ

ທ່ານ ມິວລ໌ເຕິນ ອອດສ໌ບອນ (Milton Osborne) ທີ່ໄດ້ເຊື້ອເຊີນໃຫ້ຂ້າພະເຈົ້າຂຽນຊຸດປະຫວັດສາດໂດຍຫຍໍ້ຂອງອາຊີ. ຂ້າພະເຈົ້າບໍ່ເຄີຍຄິດເລີຍທີ່ຈະໄດ້ຂຽນບົດສັງລວມປະຫວັດສາດກ່ຽວກັບປະເທດລາວ ເຊິ່ງເມື່ອໄດ້ລົງມືຂຽນແທ້ແລ້ວ ກໍ່ໄດ້ຊ່ວຍສ້າງຄວາມກະຈ່າງແຈ້ງໃຫ້ກັບຂ້າພະເຈົ້າ ກ່ຽວກັບອະດີດຕະການຂອງປະເທດນີ້ ທີ່ຍັງສ້າງຄວາມກັງວົນໃຈໃຫ້ກັບຂ້າພະເຈົ້າມາໄດ້ຫລາຍປີ.

# 1

# ກ່ອນເປັນປະເທດລາວ

ໃນທ້າຍສະຕະວັດທີ 19 ປະເທດລາວໄດ້ພົ້ນຕົວຂຶ້ນມາໃນຖານະເປັນຊາດໜຶ່ງ. ນີ້ແມ່ນໝາກຜົນຂອງຂະບວນການທາງປະຫວັດສາດອັນຍືດເຍື້ອຍາວນານ ທີ່ມັກມີຄວາມສັບສົນອົນລະເວງ ເຊິ່ງເຫລົ່າອານາຈັກດັ້ງເດີມທັງຫລາຍຂອງພາກພື້ນອາຊີຕາເວັນອອກສ່ຽງໃຕ້ ມີແຕ່ສູ້ຣົບຂ້າຟັນກັນ ແລະມັກຈະກືນກິນເຊິ່ງກັນແລະກັນຢູ່ເລື້ອຍມາ. ກຸ່ມຊົນທີ່ແຕກຕ່າງເຊື້ອພັນກັນຂອງຊົນຊາວໄຕ, ແລະຊົນເຜົ່າອື່ນໆ ໄດ້ຄ່ອຍໆຖືກຫລໍ່ຫລອມ ແລະເຊື່ອມເຂົ້າກັນໂດຍສາສະໜາພຸດນິກາຍເຖຣະວາດ. ສິ່ງນີ້ໄດ້ຮັບປະກັນໃຫ້ເກີດການເຊື່ອມໂຍງກັນທາງດ້ານວັດທະນະທຳໃນທົ່ວພາກພື້ນດັ່ງກ່າວ. ເຖິງຢ່າງໃດກໍ່ຕາມ ຄວາມແຕກຕ່າງລະຫວ່າງທ້ອງຖິ່ນກໍ່ຍັງຄົງມີຄວາມສຳຄັນຢູ່. ເຖິງແມ່ນວ່າອານາຈັກລາວ ຫລື ອານາຈັກລ້ານຊ້າງ ໄດ້ເຄີຍເປັນຕົວຫລັກສຳຄັນທີ່ມີບົດບາດຂອງພາກພື້ນໃນຍຸກສະຕະວັດທີ 15 ກໍ່ຕາມ ອານາຈັກນີ້ ແລະອານາຈັກລາວອື່ນໆທີ່ເກີດໃນໄລຍະຕໍ່ມາ ກໍ່ຍັງໄດ້ຖືກບົດບັງໂດຍອານາຈັກທີ່ເກີດໃໝ່ ຢູ່ໃນເຂດທີ່ຮ້ອງກັນວ່າປະເທດໄທໃນປັດຈຸບັນ. ຍ້ອນບໍ່ມີທາງອອກສູ່ທະເລ ແລະຢູ່ຫ່າງໄກຈາກການປ່ຽນແປງທາງດ້ານເສດຖະກິດ ແລະການເມືອງ ທີ່ນຳມາສູ່ພາກພື້ນໂດຍການຂະຫຍາຍອິດທິພົນຂອງພວກເອີຣົບ ບັນດາອານາຈັກຕ່າງໆທີ່ຕັ້ງຢູ່ໃນດິນແດນຂອງລາວ ຈຶ່ງເກືອບໄດ້ຫາຍສາບສູນໄປໃນສະຕະວັດທີ 19 ໃນຂະນະທີ່ລັດອື່ນທີ່ຢູ່ໃກ້ຄຽງຊ້ຳພັດໄດ້ເຕົ້າໂຮມກັນ ສ້າງຄວາມເຂັ້ມແຂງໃຫ້ກັບຕົນເອງ ບາງເທື່ອກໍ່ອາດເວົ້າໄດ້ວ່າ ການລ່າເມືອງຂຶ້ນຂອງຝຣັ່ງເສດ ໄດ້ເຂົ້າມາພຽງເພື່ອສະກັດກັ້ນການກືນກິນປະເທດລາວຈາກບັນດາປະເທດໃກ້ຄຽງ.

# ຊາວໄຕ

ຄຳວ່າ "ໄຕ" ແມ່ນຂະແໜງພາສາໜຶ່ງເຊິ່ງຢູ່ໃນຍຸກໜຶ່ງນັ້ນ ແມ່ນໄດ້ນຳໃຊ້ເພື່ອອ້າງເຖິງເຜົ່າພັນ ຫລື ເຊື້ອຊາດ ທີ່ມີວັດທະນະທຳຮ່ວມກັນໂດຍລວມ. ເປັນທີ່ເຊື່ອກັນວ່າ, ເຊື້ອຊາດໄຕໄດ້ມີຕົ້ນກຳເນີດມາຈາກດິນແດນໜຶ່ງຂອງເຂດກວາງຊີ ຢູ່ທາງພາກໃຕ້ຂອງປະເທດຈີນ ແລະຍ້ອນຖືກກົດດັນຈາກການແຜ່ຂະຫຍາຍຂອງຈັກກະວັດຈີນ ພວກເຂົາເຈົ້າຈຶ່ງໄດ້ເລີ່ມພາກັນເຄື່ອນຍ້າຍລົງໄປທາງທິດຕາເວັນຕົກສຽງໃຕ້ ໃນຍຸກພັນປີທຳອິດຂອງຍຸກຮ່ວມສະໄໝ. ທຸກວັນນີ້ຊົນຊາວໄຕແມ່ນໄດ້ກະຈາຍໄປທົ່ວດິນແດນອາຊີອາຄະເນ. ພວກເຂົາເຈົ້າສາມາດພົບເຫັນໄດ້ຕາມເຂດຊາຍແດນພາກໃຕ້ຂອງປະເທດຈີນ, ພາກເໜືອຂອງປະເທດຫວຽດນາມ, ປະເທດພະມ້າ, ພາກຕາເວັນອອກສຽງເໜືອຂອງປະເທດອິນເດຍ ແລະແນ່ນອນ ໄດ້ປະກອບເປັນປະຊາຊົນສ່ວນໃຫຍ່ຂອງປະເທດລາວ ແລະປະເທດໄທ. ພວກໄຕເຊິ່ງໄດ້ສືບຕໍ່ດຳລົງຊີວິດຢູ່ທົ່ງພຽງຂອງຮ່ອມພູທາງພາກເໜືອຂອງປະເທດລາວ ແລະຫວຽດນາມ ໄດ້ຖືກເອີ້ນວ່າເປັນ "ຊົນເຜົ່າ" ເພາະພວກເຂົາເຈົ້າບໍ່ເຄີຍໄດ້ສ້າງຕັ້ງເປັນລັດຂຶ້ນເລີຍ. ເຖິງຢ່າງໃດກໍ່ຕາມ, ພວກໄຕທີ່ໄດ້ເຄື່ອນລົງມາສູ່ທົ່ງພຽງ ແລະໄດ້ກໍ່ຕັ້ງລັດຕ່າງໆຂຶ້ນນັ້ນ ໄດ້ຂ້າມຜ່ານຈຸດປ່ຽນແປງທັງທາງດ້ານວັດທະນະທຳ ແລະທັງທາງດ້ານການເມືອງພ້ອມໆກັນ.

ແຕ່ວ່າ, ຂະບວນວິວັດນັ້ນໄດ້ໃຊ້ເວລາຫລາຍສະຕະວັດ ກວ່າກຸ່ມກ້ອນທີ່ພວກເຮົາຮູ້ກັນໃນປັດຈຸບັນນີ້ວ່າ ປະເທດລາວ ແລະ ປະເທດໄທ ຈະພົ້ນຂຶ້ນມາມີຕົວຕົນຈາກປະຫວັດສາດຂອງພາກພື້ນທີ່ສຸດສະຫລັບຊັບຊ້ອນ ເຊິ່ງເຊື້ອຊາດໄຕ ໄດ້ເປັນຜູ້ມີບົດບາດສຳຄັນທີ່ເປັນຂໍກະແຈ. ໃນຄວາມເປັນຈິງແລ້ວ, ກ່ອນສະຕະວັດທີ 19 ມັນມີຄວາມໝາຍໜ້ອຍທີ່ໃຊ້ຄຳສັບກ່ຽວກັບຊົນເຜົ່າ "ລາວ" ຫລື "ໄທ" ເຖິງແມ່ນວ່າມັນຈະເປັນເລື່ອງປົກກະຕິສຳລັບປະຫວັດສາດແຫ່ງຊາດທີ່ຈະຕ້ອງໄດ້ສະທ້ອນພາບຂອງເຂົາເຈົ້າ ຫວນກັບໄປໃນອະດີດຕະການທີ່ຍາວໄກ. ຂ້າພະເຈົ້າຄິດວ່າ ການຮຽບຮຽງປະຫວັດສາດແບບຊາດນິຍົມແນວນີ້ ແມ່ນບິດເບືອນຄວາມເຂົ້າໃຈຂອງພວກເຮົາກ່ຽວກັບວ່າ ໂລກສະໄໝໃໝ່ໄດ້ເກີດມີຕົວຕົນໄດ້ແນວໃດ ດັ່ງນັ້ນ, ຂ້າພະເຈົ້າຈຶ່ງໄດ້ເອີ້ນໄລຍະເວລາໃນບົດເປີດຫົວເລື່ອງວ່າ "ກ່ອນເປັນປະເທດລາວ". ແຕ່ການເອີ້ນຊື່ "ກ່ອນເປັນປະເທດໄທ, ກຳປູເຈຍ, ພະມ້າ, ຫວຽດນາມ ຫລື ຈີນ" ກໍ່ອາດເຮັດໄດ້ເຊັ່ນດຽວກັນ ເພາະເປັນລັດທີ່ອ້ອມລ້ອມປະເທດລາວສະໄໝໃໝ່. ແຕ່ວ່າບາງຄັ້ງ ມັນກໍ່ກາຍເປັນສິ່ງທີ່ຫຍຸ້ງຍາກທີ່ຈະຫລີກລ່ຽງການເອີ້ນຊື່ເຊັ່ນນີ້ໃຫ້ກັບປະເທດເຫລົ່ານັ້ນ ແລະເພື່ອເປັນການເຂົ້າໃຈທີ່ງ່າຍຂຶ້ນ ແລະຕາມຄວາມເໝາະສົມ ຂ້າພະເຈົ້າກໍ່ໄດ້ໃຊ້ຊື່ເຫລົ່ານັ້ນໃນບາງຄັ້ງຄາວ. ແຕ່ຖ້າຫາກທ່ານປະສົງຢາກຈະເຊື່ອມຊຶມຢ່າງຖ່ອງແທ້ ເຖິງວາລະກ່ອນຍຸກສະໄໝໃໝ່ໃນອາຊີອາຄະເນແລ້ວ ພວກເຮົາກໍ່ຕ້ອງພະຍາຍາມນຶກພາບວ່າ ເຮົາເຂົ້າໄປສູ່ໂລກທີ່ຜູ້ຄົນມີຄວາມຄິດຂອງຕົນເອງ ຢູ່ໃນສະພາບສັງຄົມທີ່ແຕກຕ່າງກັນຫລາຍຈາກຂອງພວກເຮົາ.

ໂຄງປະກອບພູມສາດຕົ້ນຕໍຂອງດິນແດນບໍ່ມີທາງອອກສູ່ທະເລ ທີ່ກາຍເປັນປະເທດລາວສະໄໝໃໝ່ນັ້ນ ກໍ່ແມ່ນສາຍພູຫລວງຫວຽດນາມທີ່ຍາວຢຽດແຕ່ເໜືອສຸດໃຕ້ ເຊິ່ງເປັນຊາຍແດນດ້ານຕາເວັນອອກຂອງປະເທດລາວນັ້ນເອງ. ນອກຈາກນັ້ນ ກໍ່ຍັງມີສາຍພູອັນດັບສອງອີກທີ່ຢູ່ທາງທິດເໜືອຂອງນະຄອນຫລວງວຽງຈັນ ຄື ພູເບັ້ຍທີ່ມີຈອມສູງສຸດ ແທກໄດ້ 2.818 ແມັດ. ຈາກສາຍພູເຫລົ່ານີ້ເອງທີ່ໄດ້ເປັນແຫລ່ງກຳເນີດຂອງບັນດາແມ່ນ້ຳລຳເຊ ສາຍສຳຄັນຫລາຍສາຍທີ່ໄຫລຈາກທິດຕາເວັນອອກໄປສູ່ທິດຕາເວັນຕົກ ແລ້ວປ່ອງໃສ່ແມ່ນ້ຳຂອງ ແລະ ກໍ່ແມ່ນຢູ່ລຽບ



ແມ່ຍິງໄທດຳສອງຄົນຈາກແຂວງຫົວພັນ. ຊົນຊາດຊາວໄຕທີ່ບໍ່ຖືສາສະໜາພຸດໄດ້ແຜ່ຂະຫຍາຍລົງມາຍັງເຂດເນີນສູງຂອງປະເທດລາວ, ຫວຽດນາມ ແລະແຂວງກວາງຊີຂອງປະເທດຈີນ. ເຂົາເຈົ້າໄດ້ຮັບອິດທິພົນທາງວັດທະນະທຳຈາກອະຣິຍະທຳຈີນມາກ່ອນແລ້ວ. ໃນການຍົກຍ້າຍລົງມາທາງໃຕ້ຫລາຍຮ້ອຍປີກ່ອນນັ້ນ ຊາວໄຕບາງພວກກໍ່ໄດ້ເຄື່ອນຈາກເຂດພູຜາລົງມາຢູ່ທົ່ງພຽງ ເຊິ່ງເປັນບ່ອນທີ່ເຂົາເຈົ້າໄດ້ສຳຜັດກັບພຸດທະສາສະໜາ ແລະຈາກນັ້ນວັດທະນະທຳລາວລຸ່ມກໍ່ໄດ້ເລີ່ມເກີດຂຶ້ນມາ.

ຕາມສາຍນ້ຳເຫລົ່ານີ້ ທີ່ພວກເຮົາພົບເຫັນທົ່ງພຽງອັນອຸດົມສົມບູນ ຍ້ອນກະແສນ້ຳພັດພາເອົາດິນຈາກບ່ອນອື່ນມາສະສົມໃຫ້ກາຍເປັນທີ່ທີ່ເໝາະສົມສຳລັບນາເຂົ້າ. ຂະນະທີ່ເຂດເນີນສູງໂດຍທົ່ວໄປບໍ່ຄ່ອຍອຸດົມສົມບູນນັ້ນ ພັດປະກົດມີເຂດພູພຽງທີ່ສຳຄັນສອງເຂດຄື: ເຂດໜຶ່ງຢູ່ແຂວງຊຽງຂວາງຢູ່ພາກເໜືອ ຄື ທົ່ງໄຫຫີນ ເຊິ່ງເປັນທົ່ງຫຍ້າກວ້າງ ແລະອີກເຂດໜຶ່ງ ກໍ່ແມ່ນພູພຽງບໍລະເວນຂອງແຂວງຈຳປາສັກ ຢູ່ທາງພາກໃຕ້ ເຊິ່ງມີດິນອຸດົມສົມບູນເໝາະສົມ ແລະພຽງພໍທີ່ຈະຮອງຮັບການເພີ່ມພູນຜະລິດຜົນຂອງສວນກາເຟທີ່ນັບມື້ນັບມີສູງຂຶ້ນ. ແຕ່ວ່າພື້ນທີ່ສ່ວນໃຫຍ່ຂອງປະເທດ ແມ່ນຫລູບໆໂນນໆ ແລະເປັນພູຜາທີ່ປົກຄຸມດ້ວຍປ່າຊຸ່ມຊື່ນຂອງເຂດຮ້ອນ ທີ່ໂດຍທຽບຖານແລ້ວ ແມ່ນອຸດົມສົມບູນໄປດ້ວຍສັດປ່ານາໆພັນອັນມີຄວາມຫລາກຫລາຍ. ທັງປະເທດແມ່ນນອນຢູ່ໃນພາກພື້ນທີ່ເປັນເຂດອາກາດຮ້ອນ ທີ່ມີລົມພະຍຸມໍລະສຸມ.

ແຜ່ນດິນໃຫຍ່ຂອງອາຊີຕາເວັນອອກສ່ຽງໃຕ້ ກ່ອນຍຸກຊາວໄຕເລີ່ມເຄື່ອນຍ້າຍເຂົ້າມານັ້ນ ແມ່ນເປັນເຂດປ່າດົງພົງພະນາ ເຊິ່ງເປັນທີ່ຢູ່ອາໄສຂອງບັນດາຊົນເຜົ່າທີ່ຫລາກຫລາຍ ທີ່ເວົ້າພາສາຂອງຕະກູນ ອິດສະໂຕຼເນຊຽນ ແລະ ມອນ-ຂະແມ. ໃນປະເທດລາວທຸກວັນນີ້ ຄົນເຫລົ່ານີ້ແມ່ນໄດ້ກາຍເປັນອົງປະກອບທີ່ມີສີສັນທາງດ້ານຊົນຊາດຊົນເຜົ່າ ອັນງົດງາມສະຫລັບຊັບຊ້ອນຂອງປະເທດ ເຊິ່ງຕົ້ນຕໍແລ້ວກໍ່ກະຈາຍກັນອາໄສຢູ່ຕາມສາຍພູ. ພວກໄຕທີ່ໄດ້ເຄື່ອນຍ້າຍມາຢູ່

ໃນຮ່ອມພູໃນເຂດເນີນສູງຂອງອິນດູຈີນ ເມື່ອດົນນານມາແລ້ວນັ້ນແມ່ນໄດ້ຖືກນຳພາໂດຍບັນດາຫົວໜ້າເຜົ່າທີ່ເປັນຂຸນເສິກ "ບູລຸດແຫ່ງປາຣະມີ" ຜູ້ໄດ້ຮັບການຍອມຮັບຈາກພວກເຜົ່າພັນດຽວກັນວ່າ ເປັນຜູ້ທີ່ມີພະລັງອຳນາດຜິດທຳມະດາໃນດ້ານ "ພະລັງຈິດ". ມັນແມ່ນຄວາມສຳນຶກກ່ຽວກັບລະດັບຄວາມແຕກຕ່າງດ້ານພະລັງຈິດລະຫວ່າງບຸກຄົນທີ່ມັກພົບເຫັນຢູ່ທົ່ວພາກພື້ນນີ້ເອງ ທີ່ອາດຈະເປັນສິ່ງກະຕຸ້ນການຊຶມຊັບແນວຄິດຂອງສາສະໜາຮິນດູ ຈາກອິນເດຍໄດ້ຢ່າງໄວວາ, ເຊິ່ງແນວຄວາມຄິດນີ້ ແມ່ນມາພ້ອມກັບແນວຄິດອຸດົມການໃນການສ້າງຕັ້ງລັດ ແລະຄວາມແຕກຕ່າງກັນໃຫ້ແກ່ຊັ້ນຄົນໃນສັງຄົມຂຶ້ນ. ຂຸນເສິກໄຕໄດ້ເຄື່ອນທັບຢ່າງໜັກແໜ້ນໄປຕາມທົ່ງພຽງຢູ່ຮ່ອມພູຜາຕ່າງໆ, ໄດ້ຍຶດຄອງເອົາກຸ່ມຊົນພື້ນເມືອງໃນແຕ່ລະເຂດ ຕາມເສັ້ນທາງທີ່ເຂົາເຈົ້າຜ່ານໄປ ແລ້ວຊາວພື້ນເມືອງເຫລົ່ານີ້ກໍຕົກຢູ່ໃຕ້ອຳນາດຂອງໝູ່ບ້ານ ແລະກິງຈັກການປົກຄອງຂອງຊາວໄຕ. ພວກທີ່ຖືກຍຶດຄອງນີ້ຖືກເອີ້ນວ່າ "ຂ້າ" ເຊິ່ງມີຄຳແປສະໄໝໃໝ່ວ່າ "ຂ້າທາດ". ແຕ່ວ່າ ການເຮັດແນວນີ້ແມ່ນບໍ່ສາມາດສະທ້ອນໃຫ້ເຫັນຈຸດພິເສດຂອງສັງຄົມທີ່ມີຊົນຊັ້ນ ເຊິ່ງໃນນັ້ນຜູ້ຄົນທີ່ຖືກຍຶດຄອງ ແມ່ນໄດ້ຖືກຜູກຕິດກັບເຈົ້ານາຍເໜືອຫົວ ແລະດ້ວຍຂະບວນການແຕ່ງດອງລະຫວ່າງເຜົ່າຕ່າງໆ ໂດຍສະເພາະກັບຊາວໄຕ ພວກເຂົາເຈົ້າຈຶ່ງຖືກຊຶມຊັບເຂົ້າກັບວັດທະນະທຳຂອງພວກໄຕໄປໃນຕົວ. ແນ່ນອນຂະບວນການແຕ່ງດອງຂ້າມເຜົ່າພັນນີ້ ແມ່ນພື້ນຖານຂອງການແຜ່ຂະຫຍາຍຂອງພວກໄຕນັ້ນເອງ.

## ການຈັດຕັ້ງທາງສັງຄົມຂອງຊາວໄຕ

ເພື່ອເປັນການຕອບສະໜອງແກ່ຄວາມຈຳເປັນທາງນິເວດວິທະຍາ ທີ່ມີການຂະຫຍາຍຕົວຂອງປະຊາກອນນັ້ນ, ການຍຶດຄອງອານາເຂດ ກໍ່ແມ່ນວິທີໜຶ່ງທີ່ຢືນຢັນຢ່າງຕໍ່ເນື່ອງເຖິງຄວາມປີຊາສາມາດຂອງພວກຫົວໜ້າຂຸນເສິກ. ພວກເຂົາເຈົ້າໄດ້ພັດທະນາຫລັກເກນແຫ່ງການສືບສາຍເຜົ່າພັນຂອງຄວາມເປັນເຈົ້າພະຍາ ເຊິ່ງໄດ້ກາຍມາເປັນພື້ນຕຳນານຂອງຕົ້ນກຳເນີດເຜົ່າພັນ, ໜຶ່ງໃນນັ້ນແມ່ນຕຳນານລາວເລື່ອງ *ຂຸນບູລົມ* ທີ່ໄດ້ຮັບການເລົ່າຂານຕໍ່ກັນມາຫລາຍທີ່ສຸດ ພາຍໃນມວນໝູ່ຊາວໄຕທາງພາກເໜືອ. ໃນຕຳນານເລື່ອງນີ້ໄດ້ມີພະຍາສາມທ້າວ (ຂຸນ) ໄດ້ເປັນຜູ້ມາໄກ່ເກັ່ຍຂໍ້ພິພາດລະຫວ່າງສະຫວັນຊັ້ນຟ້າ ແລະໂລກມະນຸດເບື້ອງລຸ່ມ ພາຍຫລັງທີ່ມີອຸທົກກະໄພຄັ້ງໃຫຍ່. ໃນບັນດາຂອງຂວັນທີ່ເຫລົ່າແຖນໄດ້ປະທານໃຫ້ກໍ່ຄື ຄວາຍເຊິ່ງພາຍຫລັງຫລາຍປີຕໍ່ມາກໍ່ໄດ້ຕາຍໄປ ແລ້ວເກີດມີເຄືອໄມ້ປົ່ງອອກຈາກຮູດັງຂອງມັນ ແລະໄດ້ອອກໝາກເປັນນ້ຳເຕົ້າປຸງ. ພໍແຕ່ເມື່ອໄດ້ຍິນສຽງດັງມາຈາກຂ້າງໃນນ້ຳເຕົ້າປຸງ ບັນດາທ່ານຂຸນກໍເອົານ້ຳເຕົ້າປຸງມາເຈາະ. ນັບຈາກນັ້ນເປັນຕົ້ນມາ ໝົດທຸກຄົນທີ່ອອກມາຈາກນ້ຳເຕົ້າປຸງຜ່ານທາງຮູເຈາະດ້ວຍຫລົມ ແມ່ນພວກໄຕ, ສ່ວນພວກທີ່ດຸດມົ້ນອອກມາທາງຮູເຈາະດ້ວຍເຫລັກຊີຮ້ອນໆແມ່ນພວກຂ້າ. ທັງໝົດລ້ວນເປັນຂ້ອຍຂ້າບໍລິວານຮັບໃຊ້ທ່ານຂຸນທັງສາມນັ້ນ".[1] ຖ່ານທີ່ເກີດຈາກການເຜົາໄໝ້ໄດ້ໝາຍພວກຂ້າໃຫ້ມີຜິວດຳ ເປັນຜູ້ຕ່ຳຕ້ອຍກວ່າ. ພວກໄຕແມ່ນສາມັນຊົນຖືອາວຸດ ໃນເມື່ອເປັນຜູ້ທີ່ສືບທອດຂອງຂຸນ ຈຶ່ງໄດ້ເປັນພວກເຈົ້າພະຍາຂອງທຸກຊັ້ນຄົນ.

ໃນກາລະຍຸກນັ້ນ ຖ້າຫາກມອງລົງມາຈາກພູລົງໄປເບິ່ງທີ່ຢູ່ອາໄສຂອງພວກໄຕໃນຮ່ອມພູຢູ່ເຂດເນີນສູງ ພວກເຮົາກໍ່ຈະເຫັນໝູ່ບ້ານຕິດກັນທີ່ມີເຮືອນມຸງຫຍ້າຄາ ຕັ້ງຢູ່ເທິງຕີນເສົາທີ່ແຂງແກ່ນ. ມີຫ້ວຍນ້ຳລຳທານໄຫລຜ່ານຮ່ອມພູ ເຊິ່ງເປັນທາງຂົນສົ່ງທີ່ວ່ອງໄວ ແລະເປັນແຫລ່ງອາຫານທີ່ສຳຄັນຂອງຊາວບ້ານ. ໃນເຮືອນຊານບ້ານຊ່ອງເຫລົ່ານັ້ນ ມີບາງຫລັງມີຊານຍາວໃຫຍ່ໂຕ.

ນັ້ນແມ່ນເຮືອນຂອງເຊື້ອສາຍພວກເປັນຫົວໜ້າ. ຢູ່ອ້ອມຮອບບ້ານມີທົ່ງນາໄວ້ປູກເຂົ້ານາປີ ເຊິ່ງບາງຄັ້ງກໍ່ມີລານເຊິ່ງຊາວບ້ານຮ່ວມກັນເປັນເຈົ້າຂອງ. ເນື້ອທີ່ຂອງທົ່ງນາເຫລົ່ານີ້ ກໍ່ຈະມີການແບ່ງປັນກັນທຸກປີຕາມຄວາມຕ້ອງການຂອງໃຜລາວ. ຢູ່ຕາມເປີ້ນພູຂ້າງຄຽງນັ້ນ ປ່າໄມ້ເປັນຫຍ່ອມໆ ໄດ້ຖືກຈູດໃຫ້ເປັນໄຮ່ປູກເຂົ້າແດ່ ຝ້າຍ ແລະເຂົ້າໂພດສາລີແດ່. ຖ້າບ້ານໃດບ້ານໜຶ່ງເປັນບ້ານໃໝ່ ຢູ່ເປີ້ນພູກໍ່ຈະເຕັມໄປດ້ວຍແປງດິນທີ່ຖືກຖາງແລ້ວຈູດ ແລະເຮືອນຊານບ້ານຊ່ອງກໍ່ຍັງຈະເປັນແບບຕູບຢູ່ກາງປ່າ. ຢູ່ໃຈກາງຂອງບັນດາບ້ານເຫລົ່ານີ້ ກໍ່ຈະມີໝວດຊຸນເສິກໄຕໝວດໜຶ່ງທີ່ໄດ້ຖືກສົ່ງໄປລ່າອານາເຂດ ແລະ ຈັບຊາວບ້ານຂອງເຂດໃໝ່ທີ່ຖືກຍຶດຄອງນັ້ນ. ໃນທາງການເມືອງແລ້ວ ພວກຊຸນເສິກເຫລົ່ານີ້ແມ່ນຕັ້ງຍຶດຕິດຢູ່ກັບບ້ານເດີມຂອງພວກເຂົາເຈົ້າເອງ ແລະໃນທຳນອງນີ້ຫລາຍໆບ້ານຈຶ່ງລວມກັນເຂົ້າເປັນເມືອງ ເຊິ່ງນຳພາໂດຍຫົວໜ້າເຜົ່າທີ່ມີອຳນາດສູງສຸດ. ການປົກຄອງແບບເມືອງ ແມ່ນລັກສະນະແກນກາງຂອງວັດທະນະທຳ ແລະສັງຄົມຂອງພວກໄຕເຊິ່ງຄຸນລັກສະນະສຳຄັນຂອງມັນ ແມ່ນການລວມຕົວກັນແບບມີລະດັບຊັ້ນຂອງບັນດາຫົວໜ່ວຍນ້ອຍໆ ເຊັ່ນ ບ້ານໂຮມກັນເຂົ້າເປັນເມືອງນ້ອຍ ແລະຫລາຍໆເມືອງນ້ອຍກໍ່ໂຮມເປັນເມືອງໃຫຍ່ ແລະເມືອງໃຫຍ່ກໍ່ກາຍເປັນມະຫານະຄອນຂຶ້ນຕາມການເວລາ. ໂຄງສ້າງຂອງສ່ວນປະກອບທີ່ຄ້າຍຄືກັນ ກໍ່ອາດເຕົ້າໂຮມເຂົ້າເປັນກ້ອນກຳລັງປະຕິບັດການອັນໜຶ່ງໄດ້ໃນຍາມສົງຄາມ, ຫລື ກໍ່ອາດສະຫລາຍຕົວໄປເມື່ອມີພັນທະມິດໃໝ່ເກີດຂຶ້ນ.

ຄຽງຂ້າງກັບໂຄງສ້າງສັງຄົມການເມືອງນີ້ ກໍ່ມີລຳດັບຊັ້ນຂອງຜີເຈົ້າທີ່ຕ່າງໆ. ຜີເຮືອນ ແມ່ນຢູ່ໃນການຄູ້ມກັນຂອງຜີບ້ານ, ຄ້າຍໆກັນຜີບ້ານກໍ່ຢູ່ໃນອານັດຂອງຜີເມືອງ; ຜີຊັ້ນລະດັບສູງເຫລົ່ານີ້ໄດ້ຈະຖືກປ່າວຮ້ອງມາລວມກັນປີລະເທື່ອ ຫລື ໃນທຸກງານໃຫຍ່. ເຈົ້າເມືອງ, ເຈົ້າພະຍາ, ມີຜີຄູ້ມກັນສ່ວນຕົວຂອງພວກເຂົາເອງ ຫລັກເມືອງເຊິ່ງສະຖິດຢູ່ໃນຫລັກເສົາໄມ້ ປົກກະຕິແລ້ວຈະຕັ້ງຢູ່ນອກເຮືອນຂອງພວກເຂົາ ຢູ່ບ່ອນນີ້ກໍຈະມີການຂາບໄຫວ້ບູຊາ. ເມື່ອເຈົ້າເມືອງ ຫລືເຈົ້າພະຍາຕາຍ ຫລື ຖືກຂ້າ ຫລັກເມືອງນີ້ກໍ່ຈະຖືກຖອນອອກໂດຍຜູ້ສືບທອດຂອງເພິ່ນ ເຊິ່ງຜູ້ນີ້ກໍຈະມີຫລັກຍານວິເສດ ເຕັມໄປດ້ວຍຄວາມສັກສິດຂອງເພິ່ນຕ່າງຫາກ. ອີກຄວາມໝາຍໜຶ່ງກໍ່ຄື "ອິດທິຣິດວິຊາອາຄົມ" ຂອງຫົວໜ້າທີ່ເຖົ້າແກ່ແມ່ນຕາຍໄປພ້ອມກັບຕົວເພິ່ນເອງ. ຄຸນລັກສະນະຂອງໂຄງສ້າງທາງສັງຄົມຂອງຊາວໄຕຫລາຍປະການ ຍັງຄົງດຳລົງຄົງຢູ່ຕໍ່ໄປຫລັງຈາກທີ່ມີການປ່ຽນແປງອັນໜັກແໜ້ນຍິ່ງໃຫຍ່ເກີດຂຶ້ນກັບພວກໄຕ ເມື່ອພວກເຂົາເຈົ້າໄດ້ມາເຖິງເຂດທົ່ງພຽງຂອງແຜ່ນດິນໃຫຍ່ອາຊີຕາເວັນອອກສ່ຽງໃຕ້.

## ການຕິດຕໍ່ພົວພັນກັບບັນດາລັດທີ່ຢູ່ທົ່ງພຽງ

ພວກໄຕທີ່ຍັງດຳລົງຢູ່ພູເຂົາເຂດພາກໃຕ້ຂອງປະເທດຈີນ ແລະພາກເໜືອຂອງຫວຽດນາມແມ່ນໄດ້ຮັບອິດທິພົນຈາກຄວາມສີວິໄລຂອງສອງປະເທດ ຕະຫລອດຊ່ວງຂອງຫລາຍສະຕະວັດທີ່ຜ່ານມາ. ເຂົາເຈົ້າໄດ້ຮັບເອົາລະບົບຄວາມເຊື່ອແບບຈີນ; ໂດຍສະເພາະແລ້ວ ບັນດາອາດຍາຊຸນນາງຂອງພວກເຂົາເຈົ້າ ແມ່ນໄດ້ລວມຕົວເຂົ້າກັບບັນດາລັດເຫລົ່ານັ້ນ ໃນຖານະລັດທີ່ຢູ່ພາຍໃຕ້ການປົກຄອງ ແລະໄດ້ເລີ່ມປັບຕົວຮັບເອົາແບບການນຸ່ງຫົ່ມຂອງເຂົາເຈົ້າໄປນຳ. ນີ້ອາດເປັນໄປໄດ້ວ່າ ໂດຍຜ່ານການປະເຊີນໜ້າກັບລັດຂອງຫວຽດນາມເປັນເວລາຍາວນານ ພວກໄຕໃນເຂດເນີນສູງຈຶ່ງໄດ້ຖືກຂະໜານນາມວ່າ ໄຕດຳ, ໄຕຂາວ ແລະໄຕແດງ ດັ່ງທີ່ຮູ້ຈັກກັນໃນທຸກວັນນີ້ຢູ່ໃນປະເທດລາວ ແລະປະເທດຫວຽດນາມນັ້ນເອງ.

ພວກໄຕທີ່ໄດ້ເຄື່ອນພົນໄກອອກໄປ ໂດຍມຸ່ງສູ່ທາງທິດຕາເວັນຕົກສ່ຽງໃຕ້ນັ້ນ ໄດ້ປະສົບພົບພໍ້ກັບຄວາມສີວິໄລທີ່ແຕກຕ່າງອອກໄປ, ວັດທະນະທຳຂອງສາສະໜາພຸດນິກາຍທະຣາວະດີ ເຊິ່ງສ່ວນໃຫຍ່ແມ່ນຕິດພັນກັບພວກຊາວມອນ ແລະອານາຈັກນະຄອນວັດ. ຕາມເສັ້ນທາງທີ່ຜ່ານໄປນັ້ນ ພວກໄຕອາດໄດ້ປະເຊີນໜ້າກັບຫົວໜ້ານຳພາຂອງພວກມອນ-ຂະແມ ທີ່ເຂດທົ່ງໄຫຫີນນຳ. ຫລັກຖານທາງປະຫວັດສາດທີ່ຍັງຄົງມີຫລົງເຫລືອໃຫ້ເຫັນຢູ່ທົ່ງກວ້າງນີ້ ກໍ່ແມ່ນບັນດາໄຫທີ່ເຮັດດ້ວຍຫີນຂະໜາດໃຫຍ່ທີ່ໃຊ້ໃນການຝັງສົບຂອງພວກເຈົ້າຂຸນມຸນນາຍ ເຊິ່ງເປັນລັກສະນະຈຳເພາະຂອງວັດທະນະທຳ ທີ່ໄດ້ແຜ່ຂະຫຍາຍອ້ອມແອ້ມເສັ້ນທາງການຄ້າທີ່ຕັດຜ່ານທົ່ງແຫ່ງນີ້ເພື່ອໄປຍັງໂຄຣາດ ຫລື ໄປຍັງແຂວງຢູນານ. ວັດທະນະທຳນີ້ໄດ້ລົ້ມສະຫລາຍເມື່ອການຄ້າປັ່ນປ່ວນ ແລະບາງທີກໍ່ຖືກຊ້ຳເຕີມໂດຍພວກຂຸນເສິກຊາວໄຕທີ່ແຜ່ອຳນາດລົງມາ.

ວັດທະນະທຳທະຣາວະດີຍັງໄດ້ຜຸດພົ້ນຂຶ້ນມາລຽບເສັ້ນທາງການຄ້າ, ໃນກໍລະນີນີ້ ແມ່ນຢູ່ທົ່ງຮາບພາກກາງຂອງປະເທດໄທ ລະຫວ່າງນະຄອນວັດ ພະມ້າ ແລະຂອບເຂດປະລິມົນທົນ. ພະພຸດທະຮູບທີ່ຕິດພັນກັບວັດທະນະທຳນີ້ ແມ່ນໄດ້ຖືກຄົ້ນພົບໃນປະເທດລາວ ທັງຢູ່ທາງພາກເໜືອຂອງວຽງຈັນ ແລະຢູ່ໃນເຂດຫລວງພະບາງ ໂດຍນັກບູຮານນະຄະດີ. ໃນທີ່ຂະນະທີ່ພວກເຮົາຍັງຮູ້ໜ້ອຍກ່ຽວກັບວັດທະນະທຳທະຣາວະດີນັ້ນ ສິ່ງຕົກຄ້າງທາງບູຮານຄະດີ ແມ່ນໄດ້ສະແດງໃຫ້ເຫັນຄວາມສີວິໄລທີ່ຍິ່ງໃຫຍ່ ແລະ ຮຸ່ງເຮືອງຂອງພຸດທະສາສະໜາ. ມັນອາດຈະແມ່ນວັດທະນະທຳອັນນີ້ ທີ່ພວກໄຕບາງຈຳພວກໄດ້ປະສົບພົບພໍ້ເປັນຄັ້ງທຳອິດ ໃນໄລຍະທີ່ພວກເຂົາໄດ້ຍົກຍ້າຍລົງມາຈາກຮ່ອມພູຢູ່ເຂດພູຜາ ແລະຜ່ານປະສົບການນີ້ ກໍ່ໄດ້ເຮັດໃຫ້ພວກເຂົາເຈົ້າຮູ້ຈັກກັບສາສະໜາພຸດເປັນເທື່ອທຳອິດ.

ວັດທະນະທຳທະຣາວະດີໄດ້ຖືກບົດບັງບໍ່ແມ່ນຍ້ອນພວກໄຕ ແຕ່ແມ່ນຍ້ອນການແຜ່ຂະຫຍາຍຂອງອານາຈັກນະຄອນວັດ ໃນຊ່ວງສະຕະວັດທີ 9 ໂດຍແຜ່ໄປທາງຕາເວັນຕົກ ແລະທິດເໜືອເຊິ່ງກວມເອົາພື້ນທີ່ສ່ວນໃຫຍ່ຂອງປະເທດໄທ ແລະປະເທດລາວປັດຈຸບັນ. ອານາຈັກນະຄອນວັດທີ່ມີຄວາມເຊື່ອແບບຮິນດູ ແລະນຳພາໂດຍບັນດາກະສັດຜູ້ຖືຕົນເປັນພະເຈົ້າຄ້າຍຄືກັບພະເຈົ້າສິວະ ໄດ້ເປັນຜູ້ບຸກເບີກຂອງພາກພື້ນໃນການກໍ່ຕັ້ງລັດ ທີ່ຮູ້ຈັກກັນໃນນາມລັດຈັກກະວານນະພົບ ຫລື ແມນດາລາ. ບັນດາແມນດາລານີ້ ແມ່ນມາຈາກຮູບແບບຈຳລອງຢູ່ໃນສິນລະປະກຳຂອງສາສະໜາພຸດ ຫລື ສາສະໜາຮິນດູທີ່ເປັນຮູບວົງມົນຕ່າງໆ, ເຊິ່ງເປັນຕົວແບບຂອງແນວຄວາມຄິດທີ່ອະທິບາຍໂຄງສ້າງຂອງລັດ ຫລື ຮ່າງກາຍຂອງມະນຸດໃນລະດັບຈັກກະວານ. ແນວຄວາມຄິດກ່ຽວກັບລັດແມນດາລານີ້ ແມ່ນສະແດງເຖິງສິ່ງທີ່ເຄີຍໃຊ້ກ່ຽວກັບການເມືອງ ພູມສາດ ທີ່ໃຊ້ເພື່ອອະທິບາຍເຖິງອຳນາດທີ່ຂຶ້ນລົງຂອງລັດໜຶ່ງທີ່ເປັນເປັນມິດ ແລະລັດທີ່ເປັນສັດຕູ ໃນແງ່ຂອງອານາຈັກໃດໜຶ່ງເຊິ່ງພວກຊາວໄຕໄດ້ຮັບເອົາມາຈາກຕົ້ນແບບຂອງອານາຈັກນະຄອນວັດ. ບັນດາລັດແມນດາລາເຫລົ່ານີ້ ແມ່ນມີຈຸດສຸມຢູ່ສູນກາງທີ່ມີຄວາມສັກສິດທີ່ປົກຄອງໂດຍກະສັດໜຶ່ງອົງຜູ້ປີຊາສາມາດພິເສດ ທີ່ເຊື່ອວ່າສາມາດຕິດຕໍ່ໂດຍກົງກັບອຳນາດຂອງສະຫວັນ ແລະນຳໃຊ້ອຳນາດນັ້ນເພື່ອຈັດລະບຽບໃຫ້ແກ່ໂລກ. ຫໍຜາສາດນະຄອນວັດອັນມະຫັດສະຈັນ ທີ່ສະຫລັບຊັບຊ້ອນ ແມ່ນຢືນຢັດໃນຖານະເປັນອະນຸສອນສະຖານແຫ່ງທັດສະນະຄະຕິຕໍ່ໂລກນີ້ ແລະໃນຖານະສິ່ງທີ່ປະກາດສັກດາທາງວັດຖຸຕົວຈິງ ເຖິງອານຸພາບຂອງກະສັດນັ້ນເອງ ບັນດາລັດແມນດາລາມີອຳນາດເຂດບັ້ນປາຍ ຄືບາງເທື່ອອຳນາດຂອງສູນຈະຂຶ້ນແລະລົງ ເປັນຮົ່ມເງົາບົດບັງລັດ ແລະປະຊາຊົນທີ່ຢູ່ພາຍໃຕ້ການປົກຄອງຂອງຕົນ. ໃນບັ້ນຂະຫຍາຍຕົວຂອງລັດແມນດາລາ, ບັນດາລັດນ້ອຍໆ ໄດ້ຖືກດຶງດູດໂດຍກົງເຂົ້າມາຢູ່ພາຍໃນລັດສະໝີການປົກຄອງຂອງຕົນ; ໃນ

ເວລາອຳນາດທິດຕົວ ລັດແມນດາລາກໍ່ໄດ້ຮັບອຳນາດປົກຄອງຕົນເອງຄືນມາ ຫລື ອາດເຂົ້າໄປຂຶ້ນກັບລັດແມນດາລາໃກ້ຄຽງ. ຈຸດສຸມຂອງແມນດາລາແມ່ນຄວາມສັກສິດຂອງສູນກາງ ແລະບໍ່ແມ່ນຄວາມສັກສິດຂອງອານາເຂດແລະເຂດຊາຍແດນ ອັນເປັນຈຸດເລີ່ມຕົ້ນຂອງການຂະຫຍາຍອານາເຂດ ການປົກຄອງແບບນີ້ ເຊິ່ງປະກອບດ້ວຍເຄືອຂ່າຍສ່ວນບຸກຄົນທີ່ມີຈຸດສຸມຢູ່ທີ່ກະສັດເປັນສູນກາງຫລາຍກວ່າບັນດາຫົວໜ່ວຍອານາເຂດດິນແດນ. ພະລັງອຳນາດເໜືອທຳມະຊາດທາງສະຕິປັນຍາຂອງກະສັດ ໄດ້ດຶງດູດເອົາບໍລິວານຜູ້ຕິດຕາມໄປນຳ ແລະກະສັດກໍ່ຈະຕ້ອງສະແດງພະລັງອຳນາດອອກມາໃຫ້ເຫັນຢ່າງຈະແຈ້ງ ຈຶ່ງຈະສາມາດດູດດຶງເອົາຜູ້ຕິດຕາມໃຫ້ໄດ້ຫລາຍຂຶ້ນ ເພາະວ່າການແຜ່ຂະຫຍາຍອານາເຂດເຂົ້າໄປໃນໂລກທີ່ຮູ້ຈັກກັນດີນັ້ນ ແມ່ນຕ້ອງໄດ້ສະແດງອອກເຖິງຄວາມປີຊາສາມາດ ແລະພະລັງເໜືອທຳມະຊາດຢ່າງແທ້ຈິງເທົ່ານັ້ນ. ແຕ່ວ່າພະລັງເໜືອທຳມະຊາດນີ້ ຊໍ້າພັດບໍ່ສາມາດຖ່າຍທອດຕໍ່ໃຫ້ບັນດາບຸດຕາໄດ້ ດັ່ງນັ້ນ ການສິ້ນພະຊົນຂອງກະສັດ ຈຶ່ງເປັນສິ່ງສິ່ງຜົນກະທົບກະເທືອນອັນອາດເປັນການທຳລາຍໂຄງປະກອບຂອງຄວາມຈົງຮັກພັກດີຕໍ່ຕົວບຸກຄົນ ທີ່ໄດ້ກໍ່ຕົວຂຶ້ນເປັນລັດແມນດາລາສະເພາະໃດໜຶ່ງໄດ້.

ຢູ່ໃຈກາງລັດແມນດາລານະຄອນວັດ ມີປະຊາກອນສ່ວນໃຫຍ່ເປັນຊາວຂະແມ. ໃນຂະນະທີ່ມັນມີຄວາມເປັນໄປໄດ້ສູງວ່າ ປະຊາກອນສ່ວນໃຫຍ່ບໍ່ໄດ້ມອງຕົນເອງວ່າເປັນຊົນເຜົ່າເລີຍ, ແຕ່ຄວາມເປັນຊົນເຜົ່າແມ່ນຄຳທີ່ນັກປະຫວັດສາດຜູ້ສຶກສາພາກພື້ນນີ້ນິຍົມໃຊ້ກັນ. ແນ່ນອນ ເມື່ອຍັບອອກໄປເຂດນອກສູນກາງລັດສະໝີມິນທົບທີ່ເປັນທີ່ຢູ່ອາໄສຂອງປະຊາຊົນ ເຊິ່ງຢູ່ພາຍໃນການປົກຄອງພວກເຮົາ ຍິ່ງເຫັນຄວາມແຕກຕ່າງດ້ານວັດທະນະທຳຂອງພວກເຂົາເຈົ້າ ແລະຢູ່ເບື້ອງທິດເໜືອນັ້ນ ຜູ້ຄົນເຫລົ່ານີ້ກໍລວມມີພວກໄຕຢູ່ນຳ. ການຈັດແບ່ງປະເພດຊົນເຜົ່າມະຫາພາກສຳລັບຄົນເຫລົ່ານີ້ແມ່ນເປັນສິ່ງທີ່ເກີດຂຶ້ນໃນອະນາຄົດ; ສະນັ້ນ ພວກເຂົາເຈົ້າຈຶ່ງເຫັນຕົວເອງເປັນພຽງປະຊາຊົນທີ່ມາຈາກບ້ານ ຫລື ຖິ່ນຖານໃດໜຶ່ງ ທີ່ໄດ້ຖືກຊັກດຶງເຂົ້າໄປເປັນສ່ວນໜຶ່ງຂອງລະບົບວັດທະນະທຳແລະການເມືອງທີ່ມີການຈັດຕັ້ງ ແລະສັງຄົມທີ່ມີຊັ້ນຄົນເທົ່ານັ້ນ. ຕົວຢ່າງ, ເຂດຊາຍຟອງ ທີ່ຢູ່ນອກເມືອງວຽງຈັນ ກໍ່ເປັນສູນກາງສຳຄັນໜຶ່ງຂອງຣາດຊະອານາຈັກນີ້ເໝືອນກັບວັດພູ ເຊິ່ງເປັນວັດຮ້າງຊາວຂະແມ ທີ່ສະຫລັກທັກພັງຂອງແຂວງຈຳປາສັກ ຢູ່ພາກໃຕ້ຂອງປະເທດລາວ. ພວກໄຕຜູ້ຊຶ່ງໄດ້ຖືກດຶງດູດເຂົ້າໄປສູ່ລະບົບນີ້ ເຊິ່ງມີນາຍເປັນເຈົ້າໜ້າທີ່ທ້ອງຖິ່ນ ສ່ວນທີ່ເຫລືອເປັນສາມັນຊົນ ໄດ້ເລີ່ມຊຶມຊັບເອົາຫລາຍອົງປະກອບຈາກວັດທະນະທຳຂະແມ ທີ່ຫັນປ່ຽນເປັນຮົບດູ.

## ການແຜ່ຂະຫຍາຍຂອງສາສະໜາພຸດ

ສາສະໜາພຸດ ເຊິ່ງໄດ້ແຜ່ຂະຫຍາຍໃນພາກພື້ນນີ້ດ້ວຍອິດທິພົນທະຣາວະດີນັ້ນ ໄດ້ສືບຕໍ່ເຕີບໃຫຍ່ເປັນຂະນົບທຳນຽມວັດທະນະທຳປະຈຳທ້ອງຖິ່ນ ພາຍໃຕ້ການປົກຄອງຂອງອານາຈັກນະຄອນວັດ ກຸ່ມຊາວໄຕທີ່ໄດ້ຍ້າຍເຂົ້າມາເຂດທົ່ງຮາບທີ່ພາກເໜືອ ກໍ່ໄດ້ເລີ່ມຮັບເອົາທຳນຽມການປະຕິບັດພຸດທະສາສະໜາດັ່ງກ່າວນີ້ ຈາກພວກເພື່ອນບ້ານທີ່ຢູ່ໃກ້ຄຽງຂອງຕົນ. ຊົນເຜົ່າຕ່າງໆກໍ່ໄດ້ປະສົມປົນເຈືອກັນໄປ ໂດຍສະເພາະແລ້ວ ແມ່ນເຜົ່າມອນ ແລະ ເຜົ່າໄຕ. ຍ້ອນການປາບປາມຂອງສົງຄາມພາຍໃນຂອງລັດນະຄອນວັດ, ມັນໄດ້ເປັນສິ່ງເອື້ອອຳນວຍໃຫ້ເກີດມີການແລກປ່ຽນວັດທະນະທຳນີ້ຂຶ້ນ. ຕົກມາໃນໄລຍະທ້າຍຂອງສະຕະວັດທີ 12, ກະສັດຂະແມໄຊວໍຣະມັນທີ 7 (1181–1201) ໄດ້ນຳເອົາຫລັກທຳຂອງພຸດທະສາສະໜານິກາຍມະຫາຍານ

ເຂົ້າມານຳໃຊ້ໃນລັດຖະສິນຂອງພະອົງ. ຕົກມາຮອດສະຕະວັດທີ 13 ພວກເຮົາກໍ່ໄດ້ພົບເຫັນບັນດາການປ່ຽນແປງຢ່າງແຂງແຮງຂະບວນໜຶ່ງເກີດຂຶ້ນໃນທົ່ວພາກພື້ນນີ້. ນັ້ນແມ່ນພາຍຫລັງທີ່ເຈົ້າໄຊວໍຣະມັນທີ 7 ໄດ້ສິ້ນພະຊົນລົງ ອານາຈັກນະຄອນວັດໄດ້ປະສົບກັບຄວາມຕົກຕ່ຳຢ່າງໄວວາ. ບັນດາກອງທັບຂອງມົງໂກນກໍ່ໄດ້ເຮັດໃຫ້ອານາຈັກດາຫລີ ທີ່ຢູ່ທາງພາກເໜືອສຸດ (ພາກໃຕ້ປະເທດຈີນໃນປັດຈຸບັນ) ແລະອານາຈັກປາແກນ (ພະມ້າ) ຢູ່ກໍ້າແດນຕາເວັນຕົກກາຍເປັນອຳມະພາດ. ເມື່ອບັນດາອຳນາດໃນຂົງເຂດເຫລົ່ານີ້ໄດ້ອ່ອນເພຍລົງ ບັນດາມະຫານະຄອນ ແລະລັດເລັກລັດນ້ອຍຂອງກຸ່ມຊຸນເສິກກໍ່ເກີດຂຶ້ນມາ ແລະບໍ່ດົນຫລັງຈາກນັ້ນກໍ່ໄດ້ເບັ່ງບານຂຶ້ນກາຍເປັນລັດຂອງຊາວໄຕ. ລັດທີ່ສຳຄັນກວ່າໝູ່ ກໍ່ມີອານາຈັກລ້ານນາ ພາຍໃຕ້ການປົກຄອງຂອງ ເຈົ້າເມັງຣາຍ (1259-1317) ເຊິ່ງໄດ້ເປັນຜູ້ສ້າງເມືອງເອກຂອງຕົນຂຶ້ນທີ່ຊຽງໃໝ່. ອານາຈັກລ້ານນາໄດ້ກວມເອົາບັນດາຫົວເມືອງຢູ່ໃນເຂດຕ່າງໆ ທີ່ໃນປັດຈຸບັນນີ້ນອນຢູ່ໃນປະເທດພະມ້າ, ພາກໃຕ້ຂອງຈີນ ແລະພາກເໜືອຂອງປະເທດລາວ. ອີກບໍ່ດົນຕໍ່ມາ ຢູ່ທາງຕອນໃຕ້ຂອງອານາຈັກລ້ານນາ ກໍ່ມີອານາຈັກຂອງສຸໂຂໄທ ພົ້ນຕົວຂຶ້ນມາເຊິ່ງໄດ້ກວມເອົາເຂດຫລວງພະບາງເປັນໜຶ່ງໃນບັນດາລັດພາຍໃຕ້ການປົກຄອງຂອງຕົນ. ມາເຖິງໄລຍະນີ້ ສາສະໜາພຸດນິກາຍເຖລະວາດຈາກສີລັງກາ ໄດ້ແຜ່ຂະຫຍາຍຈາກພາກໃຕ້ຂຶ້ນມາ ແລະໄດ້ຄອບຄອງແນວຄິດແລະຈິດໃຈຂອງປວງຊົນຊາວອານາຈັກນະຄອນວັດ, ລ້ານນາ ແລະ ສຸໂຂໄທ. ໃນຂະນະທີ່ພິທີກຳທາງສາສະໜາພາມພວມ ສືບຕໍ່ດຳເນີນໄປໃນທິດທາງປິ່ນອ້ອມພຸດທະກະສັດຢູ່ນັ້ນ ພວກກະສັດເຫລົ່ານັ້ນກໍ່ບໍ່ໄດ້ແມ່ນກະສັດເທບ ແຕ່ເປັນຄືກັບຕົວແທນຂອງພຸດທະອົງ ຫລື ເປັນໂພທິສັດທີ່ລົງມາຈຸຕິ ເຊິ່ງມີເດຊານຸພາບ ອັນເປັນໝາກຜົນຂອງ ບຸນ ທີ່ໄດ້ສະສົມມາ ເພື່ອນຳໃຊ້ເຂົ້າໃນການສ້າງລະບຽບສັງຄົມອັນຖືກຕ້ອງຕາມທຳນອງຄອງທຳໃຫ້ແກ່ໂລກ. ໃນຂະນະທີ່ພວກເຂົາເຈົ້າໄດ້ຮັບການຍອມຮັບວ່າ ເປັນຜູ້ຄອງອານາຈັກຜູ້ທຳອິດຂອງຊາວໄຕ, ພວກເຮົາຄວນບໍ່ລືມວ່າພວກເຂົາເຈົ້າໄດ້ປົກຄອງບັນດາພົນລະເມືອງທີ່ປະກອບດ້ວຍຫລາຍເຜົ່າພັນ ນັບທັງພວກຂະແມທີ່ຫລົງເຫລືອມານຳ.

ພວກຊາວໄຕໄດ້ສ້າງຄວາມຫລາກຫລາຍທາງດ້ານວັດທະນະທຳ ຕະຫລອດໄລຍະການຍົກຍ້າຍຂອງພວກເຂົາເຈົ້າ ໂດຍໄດ້ຮັບເອົາບັນດາພິທີກຳ ແລະທຳນຽມຂອງຜູ້ຄົນທີ່ເຂົາເຈົ້າໄດ້ຍຶດຄອງ ຫລື ຢູ່ຮ່ວມກັນ ແລະພວກເຂົາເຈົ້າກໍ່ໄດ້ປະດິດຫລັກປະພຶດປະຕິບັດໃໝ່ທາງວັດທະນະທຳທີ່ປະສົມປະສານອົງປະກອບຂອງກຸ່ມຊົນເຫລົ່ານີ້ເຂົ້ານຳ ເມື່ອບັນດາຄວາມແຕກຕ່າງທາງດ້ານວັດທະນະທຳຂອງພວກໄຕໄດ້ຮັບການບັນທຶກ ພາຍລຸນມາ ໂດຍສະເພາະ ໂດຍພວກເອີຣົບ, ເຊິ່ງກໍ່ໄດ້ມີການຈຳແນກໝວດໝູ່ຊົນເຜົ່າມະຫາພາກ ເຊັ່ນ "ໄຕລື້" ຫລື "ຊານ" ໃນຂະນະທີ່ເຂົາເຈົ້າເຫັນຕົນເອງເປັນພຽງຄົນມາຈາກບ້ານ ຫລືທ້ອງຖິ່ນໃດໜຶ່ງເທົ່ານັ້ນ. ການສຶກສາຄົ້ນຄວ້າທາງດ້ານມະນຸດວິທະຍາກ່ຽວກັບຊາວໄຕ ແມ່ນແຕ່ໃນຍຸກທ້າຍຂອງສະຕະວັດທີ 20 ນີ້ ຈຶ່ງໄດ້ສະແດງໃຫ້ເຫັນວ່າແນວຄິດກ່ຽວກັບທ້ອງຖິ່ນນີ້ຍັງສືບຕໍ່ມີຄວາມສຳຄັນ ແລະພວກເຮົາຈຶ່ງເຊື່ອໝັ້ນໄດ້ວ່າແນວຄິດແບບນີ້ ມີຄວາມໜັກແໜ້ນກວ່າສະໄໝສັດຕະວັດທີ 13 ແລະ 14. ໃນຂະນະທີ່ສາສະໜາພຸດໄດ້ກວມລວມເອົາການປະພຶດປະຕິບັດທາງວັດທະນະທຳອັນຫລາກຫລາຍຂອງຊາວໄຕທີ່ມີຢູ່ກ່ອນໜ້ານັ້ນແລ້ວກໍ່ຕາມ ແຕ່ສິ່ງສຳຄັນທີ່ສຸດ ກໍ່ແມ່ນມັນໄດ້ສະໜອງໂຄງປະກອບໃຫ້ແກ່ການສ້າງແນວຄວາມຄິດທາງທິດສະດີໃຫ້ກັບຊາວໄຕ ໃຫ້ໄປໄກກວ່າທຳນຽມທ້ອງຖິ່ນຈຳເພາະຂອງເຂົາເຈົ້ານັ້ນອີກ. ສະນັ້ນ ສິ່ງທີ່ຂີດໝາຍພື້ນຖານທີ່ຊີ້ບອກເອກະລັກປະຈຳຕົວຂອງຊົນຊາວໄຕໃນເຂດທົ່ງພຽງ ຈຶ່ງແມ່ນສາສະໜາພຸດນັ້ນເອງ.



ໃນເວລາ 8 ໂມງແລງ ໝໍພອນເຈົ້າພິທີກຳປູ່ເຍີຍ່າເຍີ ແລະຮ່າງຊີງຂອງເທບພະເຈົ້າກຳລັງມຸ່ງໜ້າໄປສູ່ສະຖານທີ່ສັກກະຣະບູຊາສັກເຄເທວະດາ ຕິດຕາມດ້ວຍພິກຂຸສົງທັງຫລາຍ. ສະຖານທີ່ສັກກະຣະບູຊາສິດເທບພະເຈົ້າ ເປັນຫໍໄຕນ້ອຍໆ ເຮັດດ້ວຍໄມ້ປະກອບດ້ວຍບານປ່ອງຢ້ຽມ ຕັ້ງຢູ່ຂ້າງກຸດຕິຂອງວັດອາຮາມ. ມີຂັ້ນໄດຂຶ້ນໄປສູ່ລະບຽງ ມຸງດ້ວຍຫລັງຄາເຊິ່ງນຳໄປຫາປະຕູຂອງຫໍໄຕ... ຢູ່ພາຍໃນຫໍໄຕນັ້ນ ມີຫີບໃຫຍ່ຫ້ອຍດ້ວຍເຊືອກທີ່ບັນຈຸໜ້າກາກ ແລະຊຸດເຄື່ອງນຸ່ງຂອງປູ່ເຍີຍ່າເຍີ ແລະຮູບປັ້ນຂອງໄຕສິງນ້ອຍ ຊື່ວ່າ ສິງກືສິງຄຳ...

"ຂໍກາບບັນດາເທບທັງຫລາຍ ເດືອນ 12 ໄດ້ວຽນມາເຖິງແລ້ວ, ປີໃໝ່ນີ້ຜູ້ຂ້າຂໍວິງວອນຂໍໜ້າກາກ ເພື່ອເອົາໄປສະແດງຕໍ່ໜ້າພະພັກຂອງເຈົ້າມະຫາຊີວິດ. ຂໍພະອົງທັງຫລາຍຈົ່ງຮັບຮູ້ດ້ວຍເທີ້ນ. ພວກຜູ້ຂ້າໄດ້ນຳພາຫວານມາຖະຫວາຍພະອົງ. ພວກຜູ້ຂ້າຍັງບໍ່ໄດ້ປະຖິ້ມພິທີກຳ ແລະພວກຜູ້ຂ້າຈະບໍ່ຍອມປ່ອຍໃຫ້ຮີດຄອງປະເພນີຂອງພວກເຮົາສູນຫາຍໄປກັບການຫລົງລືມເປັນອັນຂາດ..."

ບັນດາພະພິກຂຸສົງໄດ້ສົນພາຫວານດັ່ງກ່າວ ແລ້ວກໍ່ເປີບຫີບດຶງເອົາໜ້າກາກແລະຊຸດເຄື່ອງນຸ່ງຂອງປູ່ເຍີຍ່າເຍີອອກມາພ້ອມດ້ວຍໜັງໄຕສິງນ້ອຍ ແລ້ວກໍ່ນຳເອົາໄປຍັງພະທາດ ເຊິ່ງເປັນບ່ອນທີ່ເຂົາເຈົ້ານັ່ງລົງຢູ່ເທິງແທ່ນ

ເວລາ 9 ໂມງແລງ ພວກເຈົ້າຂຸນມຸນນາຍ ແລະຂ້າລັດຖະການທັງຫລາຍພາກັນນັ່ງຢູ່ເທິງແທ່ນ. ພະທາດແມ່ນເຈີດຈ້າໄປດ້ວຍແສງສະຫວ່າງຂອງແສງທຽນນ້ອຍໆນັບພັນເຫລັ້ມທີ່ນຳມາວາງໄວ້ບູຊາ ໂດຍບັນດາຜູ້ນັບຖືຈົງຮັກພັກດີຕໍ່ສາສະໜາຫລັງຈາກໄດ້ດຳເນີນພິທີວຽນທຽນແລ້ວ. ຮ່ອມສຳລັບຍ່າງວຽນທຽນອ້ອມພະທາດນັ້ນກໍ່ແມ່ນຮຸ່ງດ້ວຍແສງສະຫວ່າງຈາກກະຕຽງນ້ຳມັນ ຕັ້ງຢູ່ເທິງຫລັກຮາວໄມ້ເຮັ້ຍ.

ໃນເວລາ 9:15 ໂມງແລງ ຜ້າພືນໃຫຍ່ກໍ່ໄດ້ປູຢູ່ເທິງແທ່ນ. ຮ່າງຊົງໄດ້ເປັນຄ້ອນຕີກອງຂຶ້ນມາເທິງແທ່ນ ຊົງນັ່ງຢູ່ຕໍ່ໜ້າກໍ່ແມ່ນປູ່ເຍີຍ່າເຍີ ແລະໄຕສິງ. ແລ້ວກໍ່ມີການກາບໄຫວ້ຕົວແທນຂອງພະກະສັດເຈົ້າເໜືອຫົວ ຂຶ້ນລົງສາມເທື່ອຕາມຈັງວະຂອງສຽງກອງ...

ໂດຍທ່ານ ຊາກເລີສ໌ ອາກແຊມໂບນທ໌ "ບຸນພະທາດ ທີ່ຫລວງພະບາງ", ຢູ່ໃນປຶດຊຽນເລື້ອງ *ໂຄງປະກອບຂອງສາສະໜາຂອງປະເທດລາວ*, ຈັດພິມໂດຍ ວິທະຍາ ທີ່ວຽງຈັນ ປີ 1973.

(Charles Archaimbault, 'La Fête du T'at à Luong P'rabang', in *Structures Religeuses du Laos*, Editions Vithagna, Vientiane, 1973).

# ຂໍໂທດຫຼາຍໆ

ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...



ດ້ວຍຄວາມຮັກແພງ